ໃຫ້ທຶນໂດຍ
ສະຫະພາບ ເອີຣົບ

care

Lao Journalists Association

# ເງື່ອນໄຂ ການປະກວດຂຽນຂ່າວປະຈຳປີ 2025

**ພາຍໃຕ້ໂຄງການ ສ້າງຄວາມເຂັ້ມແຂງໃຫ່ແກ່ສື່ມວນຊົນ, ອົງການຈັດຕັ້ງມະຫາຊົນ**
**ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ.**

## ສຳລັບ ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ

### 1. ເງື່ອນໄຂທົ່ວໄປ

- **ຮູບແບບການແຂ່ງຂັນ:** ແມ່ນຈະໄດ້ປະກາດແຈ້ງຂ່າວຜ່ານສື່ສັງຄົມອອນລາຍ ຢູ່ Facebook, Website.
- **ຜູ້ມີສິດເຂົ້າປະກວດ:** ນັກສ້າງເນື້ອໃນອິດສະຫຼະ (Blogger/Influencer) ທີ່ເຂົ້າຮ່ວມການຝຶກອົບຮົມນຳໂຄງການ ແລະ ບໍ່ໄດ້ເຂົ້າຮ່ວມນຳໂຄງການ. ນັກຂ່າວພາກລັດ, ພາກອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ບໍ່ສາມາດເຂົ້າຮ່ວມການປະກວດໄດ້.
- **ລິຂະສິດ:** ຜູ້ສົ່ງເຂົ້າປະກວດຕ້ອງເປັນເຈົ້າຂອງຜົນງານຕົ້ນສະບັບຢ່າງສົມບູນ ແລະ ແທ້ຈິງ. ຫ້າມລັກຄັດລອກເອົາຜົນງານຂອງຜູ້ອື່ນ.
- ບົດຄວາມ ວິດີໂອ ທີ່ສ້າງຂຶ້ນ ສາມາດນຳໃຊ້ ປັນຍາປະດິດ ຫຼື AI ເຂົ້າຊ່ວຍໃນການຄິດ, ການອອກແບບ ແລະ ການຜະລິດໄດ້ 100% ຫຼື ບາງສ່ວນ, ແຕ່ຕ້ອງໄດ້ຮັບການກວດສອບ ປັບປຸງ ແລະ ຢັ້ງຢືນ ຄວາມຖືກຕ້ອງ ຈາກຜູ້ຜະລິດ.
- ກໍລະນີນຳໃຊ້ຮູບພາບ ຫຼື ວິດີໂອທີ່ມີບຸກຄົນອື່ນ ຫຼື ຂອງບຸກຄົນອື່ນ ຕ້ອງໄດ້ຮັບອະນຸຍາດການນຳໃຊ້ຮູບພາບ/ສຽງ/ຄລິບວິດີໂອ ຖ້າມີການນຳໃຊ້ຜົນງານຂອງບຸກຄົນທີສາມ.
- **ຈັນຍາບັນ:** ເນື້ອໃນຕ້ອງບໍ່ຂັດກັບລະບຽບກົດໝາຍ ແລະ ວັດທະນະທຳຂອງຊາດລາວ, ບໍ່ມີເນື້ອໃນທີ່ອາດສ້າງຄວາມແຕກແຍກ, ການໝິ່ນປະໝາດ, ຫຼື ກະທົບຕໍ່ຄວາມສະຫງົບຂອງສັງຄົມ.

### 2. ເງື່ອນໄຂ ຂອງການຜະລິດບົດຂ່າວທີ່ເປັນ ໂປສເຕີ້

- ເນື້ອໃນຕ້ອງກ່ຽວຂ້ອງກັບ ການທ່ອງທ່ຽວແບບອະນຸລັກ, ການປູກຈິດສຳນຶກ ເພື່ອປົກປ້ອງສິ່ງແວດລ້ອມ.
- ໂປສເຕີ້ ຕ້ອງເປັນຂະໜາດແນວຕັ້ງ (Portrait) ຂະໜາດ 1,080 x 1,350 px ທີ່ສາມາດສອດຄ່ອງກັບການພິມ ຫຼື ການເຜີຍແຜ່ທາງສື່ສັງຄົມ.
- ຄວາມລະອຽດຢ່າງໜ້ອຍ **300 dpi** (dots per inch), ຕ້ອງສົ່ງເປັນໄຟລ໌ **.JPG, .PNG, ຫຼື .PDF** ຄຸນນະພາບສູງຢ່າງໜ້ອຍ 3MB ຂຶ້ນໄປ.
- ຕ້ອງປະກອບມີ **ຫົວຂໍ້ຂ່າວ** ທີ່ຊັດເຈນ, ກະທັດຮັດ ແລະ ໂລໂກ້ຂອງໂຄງການ. ຂ່າວຕ້ອງເປີດເຜີຍແຫຼ່ງທີ່ມາຂອງຂໍ້ມູນ.
- ການຈັດວາງອົງປະກອບ (Layout), ການໃຊ້ສີ, ແລະ ຕົວໜັງສືຕ້ອງດຶງດູດສາຍຕາ ແລະ ອ່ານງ່າຍ.
- ໂປສເຕີ້ ຕ້ອງມີຄວາມຍາວບໍ່ເກີນ 3 ໜ້າເຈັ້ຍ ຫຼື 1,500 ຄຳສັບ, ຮູບພາບປະກອບບໍ່ເກີນ 3 ໃບ ຫຼື ສັ້ນສຸດບໍ່ໃຫ້ຫຼຸດ 500 ຄຳສັບ ແລະ ຮູບພາບປະກອບ 1 ໃບ.

- ຜົນງານທີ່ສົ່ງເຂົ້າປະກວດ ຕ້ອງເປັນຜົນງານທີ່ບໍ່ທັນໄດ້ຖືກນຳໃຊ້, ບໍ່ເຄີຍໂພສລົງ ແລະ ບໍ່ເຄີຍໄດ້ຮັບລາງວັນໃດໆ ມາກ່ອນ
- ທຸກໆຜົນງານ ທີ່ສົ່ງເຂົ້າປະກວດ ຕ້ອງຮັບປະກັນບໍ່ໃຫ້ມີ ລາຍນໍ້າ (watermark) ຕິດເຂົ້າມານຳ.
- ສາມາດເຂົ້າຮ່ວມການແຂ່ງຂັນແບບດ່ຽວ ຫຼື ແບບກຸ່ມກໍໄດ້.
- ຜູ້ເຂົ້າຮ່ວມ 1 ຄົນ ຫຼື 1 ກຸ່ມ ສາມາດສົ່ງບົດຂ່າວເຂົ້າປະກວດໄດ້ທັງສອງປະເພດ ແລະ ແຕ່ລະປະເພດສາມາດສົ່ງບົດປະກວດບໍ່ຈຳກັດຈຳນວນ

**ໝາຍເຫດ:** ກໍລະນີສະໝັກແບບກຸ່ມ, ຖ້າຫາກວ່າກຸ່ມຂອງທ່ານ ຊະນະການປະກວດ, ຈະມີພຽງຜູ້ຕາງໜ້າຂອງກຸ່ມລະ 1 ທ່ານ ເທົ່ານັ້ນ ທີ່ຈະໄດ້ໄປທັດສະນະສຶກສາ ກັບໂຄງການ ຢູ່ຕ່າງປະເທດ.

### 3. ເງື່ອນໄຂ ຂອງການຜະລິດບົດຂ່າວທີ່ເປັນ ວິດີໂອ

- ເນື້ອໃນຕ້ອງກ່ຽວຂ້ອງກັບ ການທ່ອງທ່ຽວແບບອະນຸລັກ, ການປູກຈິດສຳນຶກ ເພື່ອປົກປ້ອງສິ່ງແວດລ້ອມ
- ບົດເລື່ອງວິດີໂອ ຄວາມຍາວບໍ່ເກີນ 3 ນາທີ, ຕ້ອງເປັນຄລິບສັ້ນທີ່ກະທັດຮັດ ແລະ ສາມາດເຜີຍແຜ່ໃນສື່ສັງຄົມໄດ້.
- ຄວາມລະອຽດຢ່າງໜ້ອຍ **HD 1080p** (1920x1080) ແລະ ຕ້ອງສົ່ງເປັນໄຟລ໌ **.MP4**
- ຕ້ອງມີການບັນຍາຍ **Subtitles** ຫຼື ການສຳພາດທີ່ **ຊັດເຈນ**, **ຕ້ອງມີຄຳບັນຍາຍ (Subtitles)** ເປັນພາສາລາວ ຖ້າຫາກຜົນງານທີ່ສົ່ງເຂົ້າປະກວດມີເນື້ອໃນເປັນພາສາອື່ນ
- ຫ້າມການຕັດຕໍ່ ຫຼື ນຳໃຊ້ຂໍ້ມູນທີ່ມີຄວາມບິດເບືອນ (ຂໍ້ມູນປອມ)
- ຄວນໃຊ້ສຽງດົນຕີປະກອບທີ່ຖືກຕ້ອງຕາມກົດໝາຍລິຂະສິດ
- ຜົນງານທີ່ສົ່ງເຂົ້າປະກວດ ຕ້ອງເປັນຜົນງານທີ່ບໍ່ທັນໄດ້ຖືກນຳໃຊ້, ບໍ່ເຄີຍໂພສລົງ ແລະ ບໍ່ເຄີຍໄດ້ຮັບລາງວັນໃດໆ ມາກ່ອນ
- ທຸກໆຜົນງານ ທີ່ສົ່ງເຂົ້າປະກວດ ຕ້ອງຮັບປະກັນບໍ່ໃຫ້ມີ ລາຍນໍ້າ (watermark) ຕິດເຂົ້າມານຳ
- ສາມາດເຂົ້າຮ່ວມແຂ່ງຂັນແບບດ່ຽວ ຫຼື ແບບ ກຸ່ມກໍໄດ້.
- ຜູ້ເຂົ້າຮ່ວມດ່ຽວ 1 ຄົນ ສາມາດສົ່ງບົດຂ່າວເຂົ້າປະກວດໄດ້ທັງສອງປະເພດ ແລະ ແຕ່ລະປະເພດສາມາດສົ່ງບົດປະກວດບໍ່ຈຳກັດຈຳນວນ
- ຜູ້ເຂົ້າຮ່ວມ 1 ກຸ່ມ ສາມາດສົ່ງບົດຂ່າວເຂົ້າປະກວດໄດ້ທັງສອງປະເພດ ແລະ ແຕ່ລະປະເພດສາມາດສົ່ງບົດປະກວດບໍ່ຈຳກັດຈຳນວນ

**ໝາຍເຫດ:** ກໍລະນີສະໝັກແບບກຸ່ມ, ຖ້າຫາກວ່າກຸ່ມຂອງທ່ານ ຊະນະການປະກວດ, ຈະມີພຽງຜູ້ຕາງໜ້າຂອງກຸ່ມໆລະ 1 ທ່ານ ເທົ່ານັ້ນ ທີຈະໄດ້ໄປທັດສະນະສຶກສາ ກັບໂຄງການ ທີ່ຕ່າງປະເທດ.

## ຮູບແບບ: ບົດຂ່າວທີ່ເປັນໂປສເຕີ້

| **ເກນການປະເມີນລາຍລະອຽດຄະແນນເຕັມ** | **ລາຍລະອຽດ** | **ຄະແນນເຕັມ** |
|---|---|---|
| ຄວາມຊັດເຈນ ແລະ ເຂົ້າໃຈງ່າຍ | ຂໍ້ຄວາມຫຼັກ ກະທັດຮັດ, ຊັດເຈນ, ແລະ ດຶງດູດຄວາມສົນໃຈ ໄດ້ທັນທີເມື່ອເລື່ອນຜ່ານ Feed. | 25 ຄະແນນ |
| ຄວາມຄິດສ້າງສັນ ແລະ ຮູບແບບ | ຄວາມເປັນເອກະລັກ ຂອງແນວຄິດ ແລະ ການໃຊ້ກຣາຟິກ ຫຼື ຮູບພາບທີ່ສ້າງສັນ | 25 ຄະແນນ |
| ຄຸນນະພາບຂອງພາບ/ຄວາມງາມ | ການອອກແບບສີ, ຕົວໜັງສື, ແລະ ຮູບພາບທີ່ໃຊ້ມີຄຸນນະພາບດີ ເຖິງວ່າຈະສ້າງດ້ວຍໂທລະສັບ ຫຼື ເຄື່ອງມືທົ່ວໄປ.. | 25 ຄະແນນ |
| ຄວາມກ່ຽວຂ້ອງກັບຫົວຂໍ້ | ເນື້ອໃນສອດຄ່ອງ ແລະ ຖ່າຍທອດຫົວຂໍ້ຫຼັກ ທີ່ກຳນົດໄດ້ຢ່າງມີປະສິດທິຜົນ | 20 ຄະແນນ |
| ຄວາມນິຍົມ | ຄວາມສາມາດໃນການກະຕຸ້ນໃຫ້ຜູ້ຊົມຢາກ ກົດໄລ້, ຄອມເມັ້ນ, ແຊຣ໌ ຕໍ່ຄວາມຄິດ ຫຼື ບົດເລື່ອງ | 5 ຄະແນນ |
| **ຄະແນນລວມ** | | **100 ຄະແນນ** |

## ຮູບແບບ: ບົດຂ່າວທີ່ເປັນວິດີໂອ

| **ເກນການປະເມີນລາຍລະອຽດຄະແນນເຕັມ** | **ລາຍລະອຽດ** | **ຄະແນນເຕັມ** |
|---|---|---|
| ຄວາມຄິດສ້າງສັນໃນການເລົ່າເລື່ອງ | ການນຳສະເໜີແນວຄິດທີ່ ແປກໃໝ່, ດຶງດູດ, ແລະ ສາມາດ ຈັບຜູ້ຊົມ ໄດ້ພາຍໃນ 3 ວິນາທີທຳອິດ. | 25 ຄະແນນ |
| ຄຸນນະພາບສຽງ ແລະ ຄວາມເຂົ້າໃຈ | ສຽງເວົ້າຊັດເຈນ, ການໃຊ້ດົນຕີປະກອບເໝາະສົມ, ແລະ ມີຄຳບັນຍາຍ (Subtitles) ທີ່ອ່ານງ່າຍ. | 25 ຄະແນນ |
| ຄວາມນິຍົມ | ຄວາມສາມາດໃນການກະຕຸ້ນໃຫ້ຜູ້ຊົມຢາກ ກົດໄລ້, ຄອມເມັ້ນ, ແຊຣ໌ ຕໍ່ຄວາມຄິດ ຫຼື ບົດເລື່ອງ | 5 ຄະແນນ |

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

| | | |
|---|---|---|
| ຄວາມໜ້າເຊື່ອຖື ແລະ ຄວາມຖືກຕ້ອງ | ການນໍາໃຊ້ຂໍ້ມູນທີ່ຖືກຕ້ອງ, ມີແຫຼ່ງທີ່ມາ, ແລະ ຜູ້ເວົ້າທີ່ໜ້າເຊື່ອຖື. | 25 ຄະແນນ |
| ຄວາມຄົມຊັດຂອງພາບເບື້ອງຕົ້ນ | ພາບບໍ່ມົວ, ບໍ່ມືດ ຫຼື ສະຫວ່າງເກີນໄປ, ແລະ ການຖ່າຍທໍາມີຄຸນນະພາບທີ່ຍອມຮັບໄດ້ສໍາລັບຜູ້ໃຊ້ທົ່ວໄປ. | 20 ຄະແນນ |
| **ຄະແນນລວມ** | | **100 ຄະແນນ** |

## 4. ການສົ່ງບົດປະກວດແຂ່ງຂັນຜະລິດຕະພັນສື່ສີຂຽວ:

- ຜູ້ເຂົ້າແຂ່ງຂັນ ສົ່ງບົດປະກວດໂດຍ ການໂພສຜ່ານຊ່ອງທາງອອນລາຍຂອງຕົນເອງ (Facebook, YouTube, Webiste) ແລ້ວໃຫ້ໃສ່ ເຮັສແທັກ #GAMCIL #CAREinLaos #EUinlaos #LJA #greendevelopmentissues #GreenIssuesCompetition #Citizen
- ແທັກຫາເພຈ ສະມາຄົມນັກຂ່າວລາວ (https://www.facebook.com/profile.php?id=61569623111055 ແລະ ອົງການແຄຣ໌ ລາວ (https://www.facebook.com/careinlaos)
- ພາຍຫຼັງທີ່ໂພສລົງ ທາງອອນລາຍແລ້ວ ໃຫ້ລົງທະບຽນຂໍ້ມູນຂອງຕົນເອງຜ່ານລິ້ງນີ້: https://forms.gle/yFyygL1fPyY9cQfDA

## 5. ຫົວຂໍ້ການແຂ່ງຂັນ.

ໂດຍເນັ້ນໃສ່ 3 ຂະແໜງການ: ເສດຖະກິດສີຂຽວ, ສັງຄົມ ແລະ ສິ່ງແວດລ້ອມ, ດັ່ງຫົວຂໍ້ລຸ່ມນີ້:

1. ການປົກປັກຮັກສາສິ່ງແວດລ້ອມ ໂດຍການມີສ່ວນຮ່ວມຂອງບົດບາດຍິງ-ຊາຍ **(Environment protection with a Specific focus on Gender).**
2. ການປັບຕົວຕໍ່ການປ່ຽນແປງຂອງດິນຟ້າອາກາດ ໂດຍການມີສ່ວນຮ່ວມຂອງບົດບາດຍິງ-ຊາຍ **(Climate Change Adaption with a Specific focus on Gender)"**

## 6. ວັນທີປິດຮັບຜົນງານການແຂ່ງຂັນ ຂອງທັງ 3 ກຸ່ມເປົ້າໝາຍ:

- ວັນທີ 11 ພະຈິກ 2025, ເວລາ 23:59 ໂມງ

## 7. ວັນທີປະກາດຜົນການແຂ່ງຂັນ ຂອງທັງ 3 ກຸ່ມເປົ້າໝາຍ:

- ວັນທີ 18 ພະຈິກ 2025, ທີ່ໂຮງແຮມ Holiday Inn & Suites, Vientiane.